# 10 ຂັ້ນຕອນໃນການ ໄປສຶກສາ ຢູ່ປະເທດຝຣັ່ງ



CAMPUS FRANCE
campusfrance.org
LAOS

campusfrance@if-laos.org ☎ 020 59 04 15 30 Institut Français du Laos CAMPUS FRANCE LAOS

## #01 ກຳນົດໂຄງການອາຊີບຂອງຕົນ

ຕ້ອງຮູ້ຈັກຕົວເອງໃຫ້ດີເພື່ອທີ່ຈະສາມາດກຳນົດຂະແໜງການທີ່ຕົນໃຫ້ຄວາມສຳຄັນຫຼາຍທີ່ສຸດ ແລະ ກຳນົດອາຊີບຂອງຕົນເອງໃນອານາຄົດ.

## #02 ເລືອກສາຍຮຽນ

ຂໍນັດພົບກັບຫ້ອງການ Campus France ປະຈຳລາວ ເພື່ອກຳນົດສາຍການສຶກສາທີ່ຈະສາມາດເຮັດໃຫ້ໂຄງການອາຊີບຂອງຕົນປະສົບຜົນສຳເລັດ.

## #03 ຊອກໂຮງຮຽນ / ມະຫາວິທະຍາໄລ

ເຂົ້າເບິ່ງຂໍ້ມູນກ່ຽວກັບການສຶກສາສາຍຕ່າງໆ ທີ່ສອນເປັນພາສາຝຣັ່ງ ຫຼື ພາສາອັງກິດ ໄດ້ທີ່ : www.campusfrance.org

## #04 ເບິ່ງເງື່ອນໄຂການເຂົ້າຮຽນ

ໃຫ້ຮັບປະກັນວ່າ ຕົນເອງມີເງື່ອນໄຂຄົບຖ້ວນຕາມຄວາມຕ້ອງການຂອງສະຖາບັນການສຶກສາ (ໃບປະກາສະນິຍະບັດ, ລະດັບພາສາ ...)

## #05 ຊອກທຶນການສຶກສາ

ໄປສຶກສາຕໍ່ດ້ວຍທຶນສ່ວນຕົວຂອງຕົນເອງ ຫຼື ດ້ວຍທຶນຮຽນຟຣີ :
**www.campusbourses.campusfrance.org**

## #06 ລົງທະບຽນຂໍເຂົ້າຮຽນທາງອອນລາຍ

ປະຕິບັດຕາມປະຕິທິນ ແລະ ລະບຽບການລົງທະບຽນຂໍເຂົ້າຮຽນ ຂອງແຕ່ລະສະຖາບັນການສຶກສາຂັ້ນສູງ.

## #07 ການອານຸມັດການລົງທະບຽນຂໍເຂົ້າຮຽນ

ພາຍຫຼັງທີ່ມະຫາວິທະຍາໄລ ຫຼື ໂຮງຮຽນຕອບຮັບແລ້ວ, ໃຫ້ສືບຕໍ່ຂັ້ນຕອນລະບຽບການລົງທະບຽນຮຽນທາງອອນລາຍ.

## #08 ຝຶກອົບຮົມກ່ອນເດີນທາງ

ເຂົ້າຮ່ວມຝຶກອົບຮົມເພື່ອການກຽມຕົວກ່ອນເດີນທາງ ທີ່ສະຖາບັນຝຣັ່ງ ປະຈຳ ລາວ (ວິທີການຮຽນ, ຂັ້ນຕອນດ້ານເອກະສານ ...)

## #09 ດຳເນີນຂັ້ນຕອນດ້ານເອກະສານໃນການເດີນທາງ

ຊື້ປີ້ຍົນ, ຍື່ນຄຳຮ້ອງຂໍວີຊາ ຢູ່ ສະຖານທູດຝຣັ່ງ ແລະ ຊອກທີ່ພັກ

## #10 ທຳຄວາມຮູ້ຈັກໃຫ້ຫຼາຍຂຶ້ນກວ່າເກົ່າກ່ຽວກັບເມືອງທີ່ຕົນຈະໄປສຶກສາຕໍ່

ສຶກສາຂໍ້ມູນເພີ່ມຕື່ມກ່ຽວກັບບັນດາອົງກອນທີ່ສາມາດຕ້ອນຮັບທ່ານໄດ້ໃນຊ່ວງເວລາທີ່ສຶກສາຢູ່, ບັນດາສະມາຄົມນັກສຶກສາ, ສະມາຄົມກິລາ ແລະ ວັດທະນະທຳ ຂອງເມືອງທີ່ຕົນໄດ້ສະໝັກເຂົ້າຮຽນ.